San Diego City Schools

Fact Sheet

ລະດູໃບໄມ້ລົ່ນ 2005

# ຈາກໂຮງຮຽນ – ເຂົ້າສູ່ – ວິຊາຊີບ (School-to-Career)

ໜ້າທີ່ ຂອງການ ຈາກໂຮງຮຽນ – ເຂົ້າສູ່ວິຊາຊີບ ເພື່ອຊ່ວຍເຫລືອນັກຮຽນເຂດສຶກສາແຊນດິເອໂກໃຫ້ມີຄວາມຮູ້ຄວາມສາມາດ ສ້າງຜົນສຳເຣັດຜ່ານຈາກໂຮງຮຽນເຂົ້າສູ່ວິຊາຊີບ. ສິ່ງຕ່າງໆທີ່ສູນກາງສຶກສາມີໃນລະບົບວິຊາຊີບລວມທັງ:

- ການສິດສອນທີ່ເຂັ້ມງວດ ໂດຍຜ່ານການໃຊ້ພາກປະຕິບັດຊີວິດຈິງ
- ການຮວມຄວາມສາມາດ ແລະ ວິຊາການເຂົ້າໃນພາກເຮັດວຽກງານ
- ເຂົ້າໃຈວິຊາຊີບ ແລະ ການສຳຣວດຄົ້ນຄວ້າ
- ການແນະນຳ/ນຳພາຮວມທັງການສຳຣວດວິຊາຊີບທີ່ສົນໃຈ
- ມູນນິທິການປັບປຸງວິຊາຊ່າງ/ວິຊາການ
- ສາຍຮຽນ ແລະ/ຫລື ວິຊາຊີບ
- ການຈ່າຍ ແລະ ບໍ່ໄດ້ຈ່າຍໃນການຝຶກຫັດວຽກງານ
- ການສອບເສັງສຳຣວດອັນແທ້ຈິງ

ມູນນິທິຄວາມຮູ້ດ້ານການຊ່າງ/ວິຊາການ ໄດ້ປັບປຸງການສຶກສາວິຊາຊ່າງ 15 ຂະແໜງເຂົ້າກັນເພື່ອເປັນວິທີທາງສ້າງເສຖກິດ ແລະ ປະກອບວຽກງານ. ຫ້ອງວິຊາຊີບ/ການຊ່າງຫລາຍໆຢ່າງມີໄວ້ໃນໂຮງຮຽນມັທຍົມທຸກໆແຫ່ງ. ຫ້ອງວິຊາເຫລົ່ານີ້ຈັດເຂົ້າໃນສາຍສຶກສາວິຊາຊີບຊຶ່ງມີຫ້ອງຂັ້ນເລີ່ມຕົ້ນ, ຂັ້ນກາງ ແລະ ຂັ້ນສູງ. ຫ້ອງຂັ້ນສູງແຕ່ລະຫ້ອງມີຄະນະທີ່ປຶກສາການອຸດສະຫະກັມ ເພື່ອຊິດຊ່ອຍຈັດຫລັກສູດ ແລະ ຂັ້ນມາຕຖານ ພ້ອມທັງຊ່ອຍເຫລືອພວກນັກຮຽນຮຽນຮູ້ກ່ຽວກັບການເຮັດວຽກງານຕົວຈິງ.

ພວກນັກຮຽນທີ່ສຳເຣັດສາຍສຶກສາວິຊາຊີບ ຫລື ວິຊາຮຽນ – ກຸ່ມວິຊາຊີບ ຫລື ຈາກໂຮງຮຽນນ້ອຍໆທີ່ໄດ້ໃບຢັ້ງຢືນການຈົບ ທີ່ບອກເຈາະຈົງເຖິງວິຊາຄວາມສາມາດທີ່ຮຽນສຳເຣັດ. ວິຊາໃນສາຍການຮຽນວິຊາຊີບ ຫລາຍໆຢ່າງ ໃຫ້ໂອກາດນັກຮຽນໄດ້ເຄຣດິດສຳຫລັບເຂົ້າໂຮງຮຽນວິທຍາລັຍໂດຍຜ່ານການຕົກລົງລະຫວ່າງການສຶກສາວິຊາຊີບຂອງສູນກາງສຶກສາ ກັບວິທຍາລັຍຊຸມຊົນແຊນດິເອໂກ.

## ຂໍ້ສລູບ

**ສົກຮຽນປີ 2004 – 2005:**

- **ນັກຮຽນມັທຍົມເຂດສູນກາງສຶກສາ 17,780 ຄົນໃນຊັ້ນຮຽນ 9 – 12 ໄດ້ຮັບການຝຶກອົບຮົມວິຊາຊີບ ການຊ່າງ.**
- **ນັກຮຽນມັທຍົມເຂົ້າຮຽນຫ້ອງຮຽນວິຊາຊີບເພີ້ມຂຶ້ນ 20.5 ເປີເຊັນ**
- **ນັກຮຽນ 1,796 ຄົນໄດ້ຮັບ ເຄຣດິດວິຊາຊີບວິຊາການຊ່າງ ເພື່ອຮຽນຕໍ່ໂຮງຮຽນວິທຍາລັຍຊຸມຊົນ ຂນະທີ່ຍັງຮຽນຢູ່ຊັ້ນມັທຍົມ**
- **ວິຊາການຊ່າງ 11 ຫ້ອງ ໄດ້ອະນຸມັດໃຫ້ເຂົ້າລະບົບສຶກສາຂອງມະຫາວິທຍາລັຍ UC ສຳຫລັບ ເຄຣດິດ a-g.**

ໂຄງການກະຕຽມການຊ່າງ ໄດ້ຊ່ອຍນັກຮຽນ ໃຫ້ຮຽນລະດັບວິຊາຊີບການຊ່າງ ໂດຍຊ່ອຍລິເລີ້ມເອົາເຈົ້າໄປສູ່ການຮຽນເອົາອະນຸປຣິນຍາ. ຍ້ອນວ່າເຄຣດິດເຫລົ່ານີ້ສາມາດໃຊ້ເປັນເຄຣດິດຮຽນຕໍ່ມະຫາວິທຍາລັຍສີ່ຫລາຍໆແຫ່ງ, ຮວມທັງໃຫ້ໂອກາດພວກນັກຮຽນເລືອກເຂົ້າຮຽນໃນມະຫາວິທຍາລັຍຣັຖຄາລີຟໍເນັຍ (CSU) ຫລື ມະຫາວິທຍາລັຍຄາລີຟໍເນັຍ (UC). ນອກຈາກນີ້ແລ້ວ, 11 ຫ້ອງວິຊາຊີບການຊ່າງຍັງຖືກອະນຸມັດຜ່ານຂໍ້ຮຽກຮ້ອງການເຂົ້າມະຫາວິທຍາລັຍຄາລີຟໍເນັຍ a-g ອີກດ້ວຍ.

## ຈຸດໝາຍສຳຄັນ

- ເພີ້ມຄວາມຖືກຕ້ອງເໝາະສົມຂອງການສິດສອນ ເພື່ອປັບປຸງຄວາມສະດຸດໃຈ ແລະ ຄວາມຢາກຮຽນແກ່ພວກນັກຮຽນມັທຍົມ:
  - –ເປັນຜູ້ຊ່ວຍທີ່ໝັ້ນຄົງ ເພື່ອກໍ່ສ້າງກຸ່ມຮຽນນ້ອຍໆ ແລະ ໂຮງຮຽນນ້ອຍໆ
  - –ຊ່ວຍເຫລືອການປັບປຸງທີ່ຕໍ່ເນື່ອງໃຫ້ແກ່ກຸ່ມຮຽນນ້ອຍໆ ແລະ ໂຮງຮຽນນ້ອຍໆໂດຍການແລກປ່ຽນພາກປະຕິບັດທີ່ດີກວ່າໝູ່ມານັ້ນ
  - –ຂຍາຍການພົວພັນໃນທຸຣະກິດ/ອຸສະຫະກັມ/ສັງຄົມ ເພື່ອຊຸກຍູ້ສນັບສນູນການສຶກສາວິຊາຊີບດ້ານການຊ່າງ
  - –ໃຫ້ການບໍຣິການນັກຮຽນຮວມທັງວາງແຜນການສຶກສາ, ແຜນການສຶກສາສ່ວນບຸກຄົນ, ການປຶກສາແນະນຳ ແລະ ການນຳພາ
- ເພີ້ມຄວາມເຂັ້ມງວດໃນວິຊາການຮຽນ ດ້ານການສຶກສາວິຊາຊີບການຊ່າງ
  - –ໃຫ້ການປັບປຸງດ້ານວິຊາການໂດຍເນັ້ນໜັກໃສ່ຂັ້ນມາຕຖານ ແລະ ຝຶກການສິດສອນ. ຮວມຫ້ອງວິຊາຮຽນເປັນຮ່າງທີ່ໃຊ້ທົ່ວເຂດສູນກາງ
  - –ເພີ້ມຂຍາຍຈຳນວນນັກຮຽນທີ່ຮຽນເອົາເຄຣດິດສຳຫລັບຮຽນຕໍ່ວິທຍາລັຍ ແລະ/ຫລື ຜ່ານຂໍ້ຮຽກຮ້ອງເຂົ້າ UC/CSU ສຳຫລັບ a-g.
  - –ເກັບກຳ, ຂໍ້ມູນ ທາງອອກ ແລະ ຂໍ້ສລູບ CTE ໃນຜົນສຳເຣັດ ແລະ ເຂດທີ່ຕ້ອງການປັບປຸງຂອງຫ້ອງວິຊາຮຽນ ແລະ ໂຄງການຕ່າງໆ.

*ອະພິນັ້ນທະນາການຄ່າພິມແຈກຢາຍໂດຍມູນນິທິ Annie E. Casey Foundation*

ລາຍລະອຽດຕິດຕໍ່ຫາ: **School-to-Career: (858) 496-8718**
**Media inquires: (619) 725-5578**
**www.sandi.net**
***revised 10/10/05***

ບໍຣິການຊ່ວຍເຫລືອນັກຮຽນຫລາຍກວ່າ 136,000 ຄົນ, ສູນກາງສຶກສາແຊນດິເອໂກເປັນສູນກາງໃຫຍ່ແຫ່ງທີສອງໃນຣັຖຄາລີຟໍເນັຍ, ຊຶ່ງມີໂຮງຮຽນຫລາຍກວ່າ 202 ແຫ່ງ ແລະມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າເຮັດເຕັມເວລາ (ຊຶ່ງເປັນຕົວແທນໃຫ້ພະນັກງານຈຳນວນຫລາຍກວ່າ 15,800 ຄົນ.) ສູນກາງສຶກສາແຊນດິເອໂກໄດ້ປັບປຸງຄວາມສຳເຣັດຂອງນັກຮຽນໂດຍຜ່ານການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ ແລະ ວິຊາເລກໃນຊັ້ນຮຽນກຽມອະນຸບານເຖິງປີທີ 12.
ສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສມັຍ ແລະ ດຳເນີນງານຜ່ານການພົວພັນຂອງພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ.

ພາລະໜ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ
ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.